ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ເລກທີ: 121 /ຈຂ.ບກ
ບໍ່ແກ້ວ, ລົງວັນທີ 01 ມີນາ 2016

# ຄຳສັ່ງແນະນຳ
## ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ, ປົກປັກຮັກສາ ປ່າສະຫງວນແຫ່ງຊາດ ນ້ຳການ, ແຂວງບໍ່ແກ້ວ.

ເຖິງ: ບັນດາທ່ານຫົວໜ້າ ພະແນກການ, ອົງການອ້ອມຂ້າງແຂວງ, ຫົວໜ່ວຍທຸລະກິດ, ສອງກອງບັນຊາການ, ບັນດາທ່ານເຈົ້າເມືອງ, ຫົວໜ້າຫ້ອງການ ທຸກຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ບ້ານພາຍໃນອ້ອມຂ້າງປ່າສະຫງວນແຫ່ງຊາດ ນ້ຳການ.

- ອີງຕາມ: ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ ໝວດທີ III ມາດຕາ 14 ຂໍ້ທີ 7.
- ອີງຕາມ: ກົດລະບຽບວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດສະບັບ ເລກທີ 0306/ກປ, ລົງວັນທີ 08 ທັນວາ 2003.
- ອີງຕາມ: ຄຳແນະນຳ ຂອງລັດຖະມົນຕີວ່າການກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບ ເລກທີ 3635/ກຊສ, ລົງວັນທີ 25 ມິຖຸນາ 2015 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ການຄຸ້ມຄອງປ່າປ້ອງກັນ ແລະ ປ່າສະຫງວນ ໃນຂອບເຂດ ທົ່ວປະເທດ.
- ອີງຕາມ: ບົດບັນທຶກກອງປະຊຸມປຶກສາຫາລື ລະຫວ່າງພະແນກການທີ່ກ່ຽວຂ້ອງ ລົງວັນທີ 08/12/2015 ແລະ ມະຕິກອງປະຊຸມຄະນະປະຈຳພັກແຂວງບໍ່ແກ້ວ ສະບັບເລກທີ 856/ຄປພຂ, ລົງວັນທີ 31 ທັນວາ 2015.

ເພື່ອປະຕິບັດຕາມລະບຽບ ກົດໝາຍ ແລະ ບັນດາມະຕິຄຳສັ່ງຕ່າງໆ ໃຫ້ໄດ້ຮັບຜົນສູງ, ທັງແມ່ໃສ່ການເພີ່ມທະວີ, ຄຸ້ມຄອງ, ປົກປັກຮັກສາ ປ່າສະຫງວນແຫ່ງຊາດ ນ້ຳການ ໃຫ້ມີຄວາມສົມບູນທາງດ້ານທຳມະຊາດຕະຫຼອດໄປເວົ້າລວມ, ເວົ້າສະເພາະ ແມ່ນເຮັດໃຫ້ປ່າສະຫງວນ ມີຄວາມອຸດົມສົມບູນ, ທັງປົກປັກຮັກສາສິ່ງແວດລ້ອມ, ຮັກສາແຫຼ່ງນ້ຳ, ສັດສາວາສິ່ງນາໆພັນ, ປ້ອງກັນການເຊາະເຈື່ອນ, ຮັກສາຄຸນນະພາບຂອງດິນ, ຮັກສາເຂດຍຸດທະສາດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທັງເປັນການສະກັດກັ້ນກຸ່ມຄົນບໍ່ດີ ໃນການທຳລາຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ເຈົ້າແຂວງ ບໍ່ແກ້ວ ອອກຄຳສັ່ງແນະນຳດັ່ງນີ້:

1. ໃຫ້ເພີ່ມທະວີຈັດຕັ້ງເຜີຍແຜ່ບັນດາ ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍສັດນ້ຳ-ສັດປ່າ, ຂໍ້ກຳນົດ, ຄຳສັ່ງແລະລະບຽບການວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດນ້ຳ ແລະ ສັດປ່າ ດ້ວຍຫຼາຍຮູບ, ຫຼາຍແບບໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ນອນຢູ່ໃນປ່າສະຫງວນ ແລະ ເຂດອ້ອມຂ້າງປ່າສະຫງວນ ໃຫ້ເຊື່ອມຊຶມ ແລະ ຮັບຊາບກັນຢ່າງທົ່ວເຖິງ.

2. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ປະສານສົມທົບກັບ ພາກສ່ວນກ່ຽວຂ້ອງຮີບຮ້ອນວາງແຜນສຳຫຼວດ-ຈັດສັນ ປ່າສະຫງວນແຫ່ງຊາດ ນ້ຳການຄືນ ໃຫ້ສຳເລັດໂດຍໄວ ແລະ ພ້ອມກັນຄຸ້ມຄອງ, ກວດກາ ປ່າສະຫງວນ ຕາມແຜນຈັດສັນ ດ້ວຍການປັກຫຼັກໝາຍ, ຕິດປ້າຍ ຂອບເຂດແດນໃຫ້ຈະແຈ້ງຄັກແນ່ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດເຊື່ອມຕໍ່, ເຂດກັນຊົນ ທີ່ໄດ້ກຳນົດຕາມແຜນຈັດສັນ ເພື່ອປ້ອງກັນການບຸກລຸກ ແລະ ທຳລາຍ ປ່າສະຫງວນແຫ່ງຊາດ ນ້ຳການ.

3.ໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາຄືນ ບັນດາຫຼັກໝາຍເຂດແດນປ່າສະຫງວນແຫ່ງຊາດນ້ຳການ, ທີ່ໄດ້ເຮັດໃນເມື່ອກ່ອນ ແລະ ໃນກໍລະນີທີ່ມີການປ່ຽນແປງ ຫຼື ເປ່ເພເສຍຫາຍ ກໍ່ໃຫ້ປັວແປງ ຫຼື ປັກຫຼັກໝາຍຄືນໃໝ່.

4.ມອບໃຫ້ ສອງກອງບັນຊາການ ປກສ-ປກຊ ຂຶ້ນບັນຊີປືນທຸກໆຊະນິດ, ກວດກາຄືນ ການນຳໃຊ້ອາວຸດຂອງປະຊາຊົນ ໄດ້ມາຄືແນວໃດເພື່ອຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ.

5.ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານ,ຈັດຕັ້ງກອງກວດກາລາດຕະເວນ ເພື່ອເຮັດໜ້າທີ່ໃນການຄຸ້ມ ແລະ ປົກປັກຮັກສາປ່າສະຫງວນ, ສ້າງຕັ້ງຈຸດກວດກາຕາມຈຸດຫຼໍ່ແຫຼມ ແລະ ຕາມເສັ້ນທາງເຂົ້າ-ອອກ ເຂດປ່າສະຫງວນ ນ້ຳການ, ກວດກາລາດຕະເວນພາຍໃນ ແລະອ້ອມຂ້າງເຂດປ່າສະຫງວນຢ່າງເປັນປົກກະຕິ ແລະ ແບບກະທັນຫັນ,ໃນກໍລະນີມີເຫດການເກີດຂຶ້ນເພື່ອສະກັດກັ້ນການບຸກລຸກທຳລາຍປ່າສະຫງວນເຊັ່ນ: ການຖາງປ່າເຮັດໄຮ່, ການລັກລອບຕັດໄມ້ ແລະ ທຳລາຍປ່າໄມ້, ການບຸກລຸກເນື້ອທີ່ດິນ ປ່າສະຫງວນ, ການລ່າສັດ ແລະ ການຄ້າ-ຂາຍສັດນ້ຳ ແລະ ສັດປ່າ ແລະ ກິດຈະກຳອື່ນໆ ທີ່ລະເມີດລະບຽບ ກົດໝາຍ.

6.ຫ້າມພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນທົ່ວໄປ ເຄື່ອນໄຫວໃນເຂດປ່າສະຫງວນນ້ຳການ ໂດຍບໍ່ໄດ້ຮັບອະນຸຍາດໃນຊ່ວງເວລາ 18:00 ໂມງ ແລງ ຫາ 6:00 ໂມງ ເຊົ້າ ແລະ ຫ້າມບໍ່ໃຫ້ນຳໃຊ້ພື້ນທີ ປ່າສະຫງວນ ເປັນບ່ອນທຳມາຫາກິນ ທີ່ບໍ່ຖືກຕ້ອງ, ຂົ່ມຂູ່ຕໍ່ຊັບພະຍາກອນປ່າໄມ້ ຊີວະນາງພັນ ໃນເຂດປ່າສະຫງວນຢ່າງເດັດຂາດ ( ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກທາງລັດຖະການ ) ແລະ ໃນການຊອກຢູ່ຫາກິນຂອງປະຊາຊົນໃຫ້ຫ່າງຈາກບໍລິເວນຊາຍແດນປ່າສະຫງວນ ນ້ຳການ ໄລຍະຫ່າງຈາກຫຼັກໝາຍເຂດແດນປ່າສະຫງວນ 5 ກິໂລແມັດຂຶ້ນໄປ.

8.ເມື່ອເຈົ້າໜ້າທີ່ກວດເຫັນການກະທຳຜິດຕໍ່ກັບຄຳສັ່ງສະບັບນີ້ ແລະ ລະບຽບວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດ ຜູ້ກະທຳຜິດຈະຖືກດຳເນີນຄະດີທາງແພ່ງ ຫຼື ອາຍາ ຕາມກໍລະນີໜັກ ຫຼື ເບົາ. ຕໍ່ກັບພາກສ່ວນ ແລະ ບຸກຄົນ ທີ່ມີຜົນງານໃນການປົກປັກຮັກສາປ່າໄມ້ ສັດນ້ຳ-ສັດປ່າ ຈະໄດ້ຮັບການຍ້ອງຍໍຈາກອົງການຈັດຕັ້ງຂອງລັດ ຕາມຄວາມເໝາະສົມ.

9.ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການປົກຄອງ ຂັ້ນເມືອງ, ຂັ້ນບ້ານ ເປັນຜູ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຜີຍແຜ່ຄຳສັ່ງສະບັບນີ້ໃຫ້ມີປະສິດທິຜົນ.

10.ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນຄຳສັ່ງແນະນຳໃດທີ່ຂັດກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກຍົກເລີກ. ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໃຊ້ງົບປະມານຂອງຂະແໜງການທີ່ກ່ຽວຂ້ອງ ແລະ ງົບປະມານຂອງບໍລິສັດແອນນີໂມ/

ເຈົ້າແຂວງ ບໍ່ແກ້ວ

ແຂວງ ບໍ່ແກ້ວ ... ເຈົ້າແຂວງ

ດຣ.ຄຳພັນ ເຜີຍຍະວົງ

ບ່ອນສົ່ງ:

- ເຈົ້າແຂວງ, ຮອງເຈົ້າແຂວງ — 3 ສະບັບ( ເພື່ອຊາບ ແລະ ຕິດຕາມ )
- ຫ້ອງວ່າການປົກຄອງແຂວງ — 1 ສະບັບ ( ເພື່ອຊາບ ແລະ ຕິດຕາມ )
- ສອງກອງບັນຊາການ ປກສ, ປກຊ — 1 ສະບັບ(ເພື່ອຮັບຊາບ)
- ພະແນກການຕ່າງປະເທດແຂວງ — 1 ສະບັບ(ເພື່ອຮັບຊາບ)
- ພະແນກຊັບພະຍາກອນທຳ ຊສ ແຂວງ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ພະແນກກະສິກຳ ແລະ ປ່າໄມ້ແຂວງ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ພະແນກການເງິນແຂວງ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ພະແນກອຸດສາຫະກຳ ແລະ ການຄ້າ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ເຈົ້າເມືອງ ເມືອງຫ້ວຍຊາຍ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ເຈົ້າເມືອງ ເມືອງເມິງ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ເຈົ້າເມືອງ ເມືອງຜາອຸດົມ — 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )
- ນາຍບ້ານພາຍໃນ ແລະ ອ້ອມຂ້າງ ປ່າສະຫງວນ ແຫ່ງຊາດ ນ້ຳການ 1 ສະບັບ ( ເພື່ອຊາບ ແລະ ຈັດຕັ້ງປະຕິບັດ )